**ໂຮງຮຽນວັນອາທິດ**

**ວັນອາທິດທີ 16 ເດືອນ ພຶສພາ 2021 (05-16-2021)**

## ດຳເນີນຊີວິດຕາມຖ້ອຍຄຳ

*ບໍຣິສັດໃດທີ່ທ່ານຍົກຍ້ອງວ່າເຂົາດຳເນີນຊີວິດຕາມອຸດົມການທີ່ເຂົາສື່ສານຢ່າງຈິງຈັງ?*

**ຈຸດສຳຄັນໃນບົດຮຽນ:** ວິທີການທີ່ພວກເຮົາດຳເນີນຊີວິດສະທ້ອນໃຫ້ເຫັນໃນຖ້ອຍຄຳທີ່ພວກເຮົາແບ່ງປັນ.

**ພຣະຄັມພີຕອບສນອງຕໍ່ຊີວິດ:**

ທຸຣະກິດສ່ວນຫຼາຍໃນອາເມຣິກາເປັນທີ່ຮູ້ຈັກແຕ່ສິ່ງທີ່ເຂົາຂາຍ. ພວກເຮົາບໍ່ໄດ້ໃຫ້ຄຸນຄ່າຄວາມຄິດເບື້ອງຫຼັງຂອງສິນຄ້າແລະການບໍຣິການເລີຍ. ມັນບໍ່ຄ່ອຍມີ- ແຕ່ໜ້າຊື່ນຊົມ- ເມື່ອເຮົາໄດ້ຍິນທຸຣະກິດທີ່ໂດ່ງດັງດ້ວຍຄ່ານິຍົມຄຽງຄູ່ກັບສິ່ງທີ່ເຂົາຂາຍ. ຫ້າງຫຸ້ນສ່ວນທີ່ດັງທີ່ສຸດດ້ວຍຄ່ານິຍົມທີ່ແຂງແຮງ ແລະການປະຕິບັດແຫ່ງນຶ່ງແມ່ນ Hobby Lobby.

ປະທານບໍຣິຫານ CEO ຂອງ ຫອບບີ ລອບບີ, ເດວິດ ກຣີນ (David Green), ເປັນຄົນທີ່ບໍ່ອາຍໃນຄວາມເຊື່ອຂອງເພິ່ນ. ເພິ່ນໄດ້ຕັ້ງ "ວັທນາທັມຄຣິສຕຽນ" ເພື່ອນຳພາຄົນອື່ນເພິ່ງພາພຣະເຈົ້າໃນການອະທິຖານ. ເພິ່ນອີງໃສ່ພຣະຄັມພີເປັນເຄື່ອງຊີ້ນຳການຕັດສິນໃຈໃນທຸຣະກິດຂອງເພິ່ນ. ແຕ່ ນີ້ບໍ່ແມ່ນໂສມໜ້າທີ່ເພິ່ນສະແດງອອກຕໍ່ສາທາຣະນະໂດຍຕົງ. ເພິ່ນເຫັນວ່າຜູ້ຈັດການແມ່ນຜູ້ຮັບໃຊ້ພນັກງານ, ແລະ ເພິ່ນກໍດຳເນີນຊີວິດກັບພນັກງານຕາມນັ້ນ.

- ພນັກງານໄດ້ຮັບຄ່າຈ້າງດີ ສູງກວ່າຄ່າແຮງງານຕ່ຳສຸດທີ່ກົດໝາຍໄດ້ຕັ້ງໄວ້.
- ເພິ່ນປິດຮ້ານໄວພໍ ເພື່ອໃຫ້ພໍ່ແມ່ພາລູກເຂົ້ານອນແຕ່ຫົວຄ່ຳ.
- ພນັກງານບໍ່ໄດ້ເຮັດວຽກໃນວັນອາທິດ.

ຊີວິດຂອງເຮົາຄວນທຽບຄຽງກັບສິ່ງທີ່ເຮົາເວົ້າໃນສາທາຣະນະ. ເມື່ອເຮົາບອກຄົນອື່ນເຣື່ອງພຣະເຢຊູ, ມັນສຳຄັນເທົ່າໆກັບເຂົາເຫັນພຣະເຢຊູໃນເຮົາ.

**ພຣະຄັມພີກ່າວວ່າແນວໃດ:** (ເບິ່ງຕາມຂໍ້ 1, 2, ແລະ 3,)

### ການສຶກສາພຣະຄັມພີ

### 1. <u>ໂກໂລຊາຍ 3:1-3</u>

*1. ຖ້າເຈົ້າທັງຫຼາຍຮັບການຊົງບັນດານໃຫ້ຄືນມາດ້ວຍກັນກັບພຣະຄຣິດແລ້ວ ກໍຈົ່ງສແວງຫາສິ່ງຊຶ່ງຢູ່ເບື້ອງເທິງ ຄືບ່ອນທີ່ພຣະຄຣິດຊົງສະຖິດຢູ່ ຊົງປະທັບກ້ຳຂວາຂອງພຣະເຈົ້າ. 2. ຈົ່ງເອົາໃຈໃສ່ສິ່ງທີ່ຢູ່ເບື້ອງເທິງບໍ່ໃຊ່ສິ່ງຊຶ່ງຢູ່ທີ່ແຜ່ນດິນໂລກ. 3. ເພາະວ່າເຈົ້າທັງຫຼາຍໄດ້ຕາຍແລ້ວ ແລະຊີວິດຂອງພວກເຈົ້າກໍຊົງບັງໄວ້ດ້ວຍກັນກັບພຣະຄຣິດໃນພຣະເຈົ້າ.*

ມັນເປັນການງ່າຍທີ່ຈະຕິດຢູ່ກັບສິ່ງຊຶ່ງຢູ່ແຜ່ນດິນໂລກ. ວັທນາທັມຂອງເຮົາມີອິດທິພົນຕໍ່ທຸກສິ່ງນັບແຕ່ເຄື່ອງນຸ່ງແລະວິຖີຊີວິດ ຕໍ່ນິຍາມແລະຄຸນຄ່າຂອງສາຍສັມພັນ. ຄຳໝັ້ນສັນຍາໄລຍະຍາວຕໍ່ສິ່ງໃດສິ່ງນຶ່ງກຳລັງຫຼຸດໜ້ອຍຖອຍລົງ. ວັທນາທັມຂອງເຮົາປະຈຸບັນກຳລັງປະສົບກັບການປ່ຽນແປງເຂົ້າມາຢ່າງຕໍ່ເນື່ອງ. ເທັກໂນໂລຢີກໍເພີ່ມພລັງຂັບເຄື່ອນໃສ່ການປ່ຽນແປງຂອງໂລກເຮົາ. ມືຖືຂອງເຮົາກໍຮູ້ສຶກວ່າຫຼ້າຫຼັງພາຍໃນຫົກເດືອນຫຼັງຈາກຊື້ເພາະວ່າລຸ້ນຕໍ່ໄປ "ອັນດີທີ່ສຸດ" ກໍຕິດຕາມກັນອອກມາ.

ມີການປ່ຽນແປງມະຫາສານໃນໂລກນີ້, ມັນບໍ່ເປັນການສລາດທີ່ພຍາຍາມແລ່ນຕາມເຄື່ອງທັນສມັຍເຫຼົ່ານັ້ນ. ສິ່ງທີ່ມີໃນວັນນີ້ອາດສາບສູນໄປໃນວັນໜ້າ, ແລ້ວພວກເຮົາຈະພົບວ່າພວກເຮົາຕ້ອງແລ່ນຕາມອີກ. ຄົນທີ່ເນັ້ນຊື້ເຄື່ອງ

ປົນເປີຊີວິດແບບນີ້ຈະບໍ່ພົບຄວາມອີ່ມໃຈຈັກເທື່ອ. ພວກເຮົາມັກຖືກຊັກຈູງດ້ວຍຄວາມຢາກໄດ້ສິ່ງໃໝ່, ສິ່ງແປກໃໝ່, ຫຼື ສິ່ງດີກວ່າ, ຄວາມພໍໃຈເປັນພຽງຊົ່ວຄາວ. ຢ່າງໜ້າເສັຽດາຍ, ພຣະເຢຊູບໍ່ຄືກັບໂລກນີ້. ພຣະອົງບໍ່ປ່ຽນແລະບໍ່ຫຼ້າສມັຍຈັກເທື່ອ. ພຣະອົງຊົງບໍຣິບູນ, ທ່ຽງໝັ້ນພວກເຮົາສາມາດກັບຄືນຫາພຣະອົງສເມີ.

ທ່ານໂປໂລໄດ້ບັນທຶກຄວາມໝັ້ນໃຈທີ່ພວກເຮົາພົບໃນພຣະເຢຊູ ແລະເຕືອນພວກເຮົາບໍ່ໃຫ້ສແວງຫາສິ່ງທີ່ຢູ່ແຜ່ນດິນໂລກ. ໃນເມື່ອເຮົາບອກວ່າເຮົາຢູ່ໃນພຣະຄຣິດ, ພວກເຮົາກໍຄວນປະຖິ້ມສິ່ງສຳຄັນໃນໂລກ ແລະໃຫ້ພຣະອົງສະຖິດໃນໃຈແລະໃຫ້ພຣະອົງມີສິດເໜືອຊີວິດເຮົາ. ການເຮັດແນວນັ້ນເປັນການບອກໃຫ້ຄົນອື່ນຮູ້ວ່າພວກເຮົາຢູ່ພາຍໃຕ້ສິດອຳນາດຂອງພຣະອົງ.

ເມື່ອພວກເຮົາຮັບເອົາພຣະເຢຊູເປັນອົງພຣະຜູ້ເປັນເຈົ້າ, ພວກເຮົາຍອມຮັບສະພາບບຸກຄົນ ແລະ ພຣະລັກສນະຂອງພຣະອົງ. ພວກເຮົາເຂົ້າສ່ວນໃນການຕາຍຂອງພຣະອົງ, ຕາຍຕໍ່ຊີວິດເກົ່າ, ແລະ ຊີວິດເປັນຄືນມາຂອງເຮົາໃນພຣະຄຣິດກໍຖືກເປີດເຜີຍ, ສະແດງໃຫ້ເຫັນການເດີນຕາມແບບໃໝ່ທີ່ຖວາຍກຽດພຣະອົງ. ແທນທີ່ຈະປ່ອຍໃຫ້ຄວາມບາບຂອງເຮົາແລ່ນຕາມສິ່ງຂອງ, ພວກເຮົາສາມາດດຳນີນຊີວິດດ້ວຍຄວາມຖ່ອມຕົວ, ຜູ້ເປັນເໝືອນພຣະຄຣິດດຳເນີນຊີວິດໃນການຍອມມອບຕົວໃຫ້ພຣະເຈົ້າພຣະບິດາ.

*ມີຄວາມທ້າທາຍຫຍັງແດ່ທີ່ພວກເຮົາປະເຊີນໃນການພຍາຍາມດຳເນີນຊີວິດຄຣິສຕຽນແທ້ຈິງ?*

ການມີຄຸນລັກສນະທີ່ຄ້າຍຄືກັບພຣະຄຣິດຕ້ອງຕາຍຕໍ່ຕົນເອງແລະຍອມຈຳນົນຕໍ່ສິດອຳນາດແລະຄວາມເປັນພຣະເຈົ້າຂອງພຣະເຢຊູ. ເພື່ອຢືນຢັນເຮົາເອງວ່າເປັນສາວົກຂອງພຣະເຢຊູໂດຍປາສຈາກແບບຢ່າງພຣະລັກສນະຂອງພຣະເຢຊູແລ້ວຈະພາໃຫ້ຄົນອື່ນເບິ່ງເຮົາວ່າເປັນຄົນຫຼອກລວງ, ຄົນບໍ່ຈິງແລະຄົນໜ້າຊື່ໃຈຄົດ. ຖ້າພວກເຮົາບໍ່ຕ່າງຈາກໂລກ, ພວກເຂົາກໍບໍ່ມີຄວາມຈຳເປັນຕາມພຣະເຢຊູ. "ພວກເຮົາຖືກຮຽກເອີ້ນໃຫ້ "ເປັນຄົນຈິງ," ດຳເນີນຊີວິດໃນຄວາມສັມພັນອັນແທ້ຈິງກັບພຣະອົງ, ແລະສະທ້ອນພຣະອົງໃຫ້ໂລກໄດ້ເຫັນ.

## 2. <u>ໂກໂລຊາຍ 3:12-15</u>

*12. ເຫດສັນນັ້ນໃນຖານະທີ່ເປັນພວກຊຶ່ງພຣະເຈົ້າຊົງຮັກແລະຊົງເລືອກໄວ້ໃຫ້ເປັນໄພ່ພົນຂອງພຣະອົງ ຈົ່ງສວມໃຈເມດຕາ, ໃຈປານີ, ໃຈຖ່ອມລົງ, ໃຈອ່ອນສຸພາບ, ໃຈອົດທົນດົນນານ. 13. ຈົ່ງຜ່ອນໜັກຜ່ອນເບົາເຊິ່ງກັນແລະກັນແລະຖ້າແມ່ນຜູ້ໃດມີເຣື່ອງຕໍ່ກັນ ກໍຈົ່ງຍົກໂທດໃຫ້ກັນແລະກັນ ອົງພຣະຜູ້ເປັນເຈົ້າໄດ້ຊົງໂຜດຍົກໂທດໃຫ້ເຈົ້າທັງຫຼາຍສັນໃດ ພວກເຈົ້າກໍຈົ່ງຍົກໂທດໃຫ້ກັນແລະກັນສັນນັ້ນ. 14. ແລ້ວນອກຈາກສິ່ງທັງປວງນີ້ ຈົ່ງເອົາຄວາມຮັກທີ່ເປັນສາຍຜູກມັດທຸກສິ່ງໄວ້ໃຫ້ເຖິງຄວາມຄົບຖ້ວນ. 15. ແລະຈົ່ງໃຫ້ສັນຕິສຸກທີ່ມາຈາກພຣະຄຣິດຄຸ້ມຄອງຈິດໃຈຂອງເຈົ້າທັງ-ຫຼາຍ ພຣະເຈົ້າໄດ້ຊົງເອີ້ນເຈົ້າທັງຫຼາຍໄວ້ໃຫ້ເປັນກາຍອັນດຽວ ກໍເພື່ອສັນຕິສຸກນັ້ນແລະພວກເຈົ້າຈົ່ງມີໃຈກະຕັນຍູ.*

ມີຫຍັງກ່ຽວຂ້ອງໂດຍຕົງໃນການຮັກສາລັກສນະຂອງພຣະເຈົ້າ?ທ່ານໂປໂລຊີ້ໃຫ້ເຫັນພຣະລັກສນະຂອງພຣະເຈົ້າຫຼາຍປະເດັນທີ່ພວກເຮົາຕ້ອງ "ໃສ່" ແລະສວມ. ຖານະພວກທີ່ພຣະເຈົ້າຊົງເລືອກໄວ້, ຮັກແລະແຍກໄວ້ສຳລັບພຣະຣັສມີຂອງພຣະອົງ, ພວກເຮົາຕ້ອງສະແດງອອກເຖິງພຣະລັກສນະແລະການປະພຶດດຽວກັນກັບທີ່ພຣະເຢຊູເອງໄດ້ສະແດງອອກ. ເພື່ອໂລກຈະໄດ້ເຫັນພຣະເຢຊູຜ່ານເຮົາ, ພວກເຮົາຕ້ອງມີໃຈຢາກຫົ່ມຕົວເຮົາດ້ວຍພຣະອົງ.

ຍາມພວກເຮົາຕັດສິນໃຈວ່າຈະນຸ່ງຫຍັງວັນນີ້, ຂ້າພຣະເຈົ້າມັກຈະກວດເບິ່ງພຍາກອນອາກາດ. ສະພາບດິນຟ້າອາກາດອາດປ່ຽນແປງຢ່າງໃຫຍ່ໃນເຂດປາຊີຟິກຕາເວັນຕົກສ່ຽງເໜືອ. ແຕ່ "ເຄື່ອງນຸ່ງຫົ່ມ" ລັກສນະຂອງພຣະເຈົ້າແທດເໝາະສເມີ ບໍ່ວ່າສະພາບອາກາດຝ່າຍວິນຍານອ້ອມຂ້າງເຮົາຈະເປັນຢ່າງໃດ. ພວກເຮົາຕ້ອງເລີກຖິ້ມສາຣະພັດເຫຼົ່ານັ້ນເສັຍ "ຄວາມຄຽດ, ຄວາມໂມໂຫ, ການຄິດປອງຮ້າຍ, ການກ່າວສຽດສີ, ແລະຄຳໜ້າອາຍຢ່າໃຫ້ອອກຈາກປາກຂອງພວກເຈົ້າ" (ໂກໂລຊາຍ 3:8-9), ແທນທີ່ຈະສວມເຄື່ອງເຫຼົ່ານັ້ນ "ຈົ່ງສວມໃຈເມດຕາ, ໃຈປານີ, ໃຈຖ່ອມລົງ, ໃຈອ່ອນສຸພາບ, ໃຈອົດທົນດົນນານ" ແທນ(ຂໍ້12). ເມື່ອພວກເຮົານຸ່ງເຄື່ອງແບບນີ້ການປາກົດຂອງພຣະຄຣິດ

ຈະເດັ່ນຊັດຂຶ້ນໃນພວກເຮົາ.

*ມີບາດກ້າວປະຕິບັດຕົວຈິງໃດແດ່ທີ່ຜູ້ເຊື່ອຄວນສວມພຣະລັກສນະພຣະຄຣິດ?*

ທ່ານໂປໂລໄດ້ສັນທາຄຳແນະນຳສະເພາະເພື່ອແກ້ຄວາມຂັດແຍ້ງໂດຍ "ການຜ່ອນໜັກຜ່ອນເບົາເຊິ່ງກັນແລະກັນ" (ຂໍ້13) ໂດຍຄວາມອົດກັ້ນ ແລະໃຈອົດທົນດົນນານ. ພວກເຮົາກໍຕ້ອງການການໃຫ້ອະພັຍເພື່ອຊ່ອຍເຮົາຫຼີກເວັ້ນອັນຕະລາຍຕໍ່ຫົວໃຈທີ່ບໍ່ໄດ້ຮັບການອະພັຍ. ເມື່ອເຮົາຮູ້ວ່າເຮົາເອງກໍຕ້ອງການການອະພັຍຈາກພຣະຄຣິດ, ມັນຈະເປັນການງ່າຍທີ່ຈະໃຫ້ອະພັຍຄົນທີ່ທຳຮ້າຍແລະຕໍ່ສູ້ເຮົາ.

ພຣະເຈົ້າປາຖນາໃຫ້ເຮົາເປັນນຶ່ງກັບພຣະອົງ ແລະເຊິ່ງກັນແລະກັນ- ແລະບໍ່ມີສິ່ງໃດນຳເຮົາເປັນອັນນຶ່ງອັນດຽວໄດ້ດັ່ງຄວາມຮັກ! ໃນຄວາມຮັກຂອງພຣະອົງ, ພຣະເຈົ້າປະທານສັນຕິສຸກຊຶ່ງຈະປົກຄອງແລະຄອງໃຈເມື່ອເຮົາວາງໃຈພຣະອົງ. ປົກຄອງເຮົາເອງໃນຄວາມຮັກຂອງພຣະເຈົ້າປ້ອງກັນເຮົາແລະຊັກຈູງຄົນອື່ນມາຫາພຣະຄຣິດທີ່ເຂົາເຫັນໃນເຮົາ. "ຖ້າເຈົ້າທັງຫຼາຍມີຄວາມຮັກເຊິ່ງກັນແລະກັນ ດັ່ງນີ້ແຫຼະ, ຄົນທັງປວງຈະໄດ້ຮູ້ວ່າເຈົ້າທັງຫຼາຍເປັນສາວົກຂອງເຮົາ" (ໂຢຮັນ 13:35). ສຸດທ້າຍ, ພວກເຮົາສາມາດຮັກສາລັກສນະພຣະເຈົ້າໄວ້ດ້ວຍການຂອບພຣະຄຸນສຳລັບທຸກສິ່ງທີ່ພຣະເຈົ້າໄດ້ຊົງກະທຳເພື່ອເຮົາ.

ການສະແດງອອກເຖິງລັກສນະພຣະເຈົ້າຢ່າງສມ່ຳສເມີສາມາດເຮັດໃຫ້ພຣະເຢຊູຢູ່ແນວໜ້າຂອງຊີວິດເຮົາແລະຮັບປະກັນວ່າຄົນຈະພົບພຣະອົງຜ່ານເຮົາ. ຖ້າບໍ່ມີນິສັຍ "ພຣະຄຣິດກ່ອນ" ເຮົາກໍຈະອຽງໄປຕາມໂລກໄດ້ງ່າຍແທນທີ່ຈະໃຫ້ພຣະອົງສ້າງເຮົາຂຶ້ນໃໝ່. ການແຕ່ງກາຍດ້ວຍພຣະລັກສນະຂອງພຣະເຈົ້າ ຈະຊ່ອຍຮັບປະກັນວ່າຄົນອື່ນໄດ້ເຫັນ,ໄດ້ຍິນ, ແລະໄດ້ສຳພັດການສະຖິດນຳຂອງພຣະອົງເມື່ອເຂົາເຫັນເຮົາ. ພວກເຮົາແຕ່ງກາຍເພື່ອອານາຈັກຂອງພຣະເຈົ້າຈະສຳເຣັດຍາມເຮົາສວມພຣະລັກສນະພຣະຄຣິດ.

3. **<u>ໂກໂລຊາຍ 3:16-17</u>.**

*16. ຈົ່ງໃຫ້ພຣະທັມຂອງພຣະຄຣິດສະຖິດຢູ່ໃນໃຈຂອງພວກເຈົ້າຢ່າງບໍຣິບູນ ຈົ່ງສັ່ງສອນແລະເຕືອນສະຕິກັນແລະກັນດ້ວຍປັນຍາທຸກຢ່າງ ຈົ່ງຮ້ອງເພງດ້ວຍເພງສັຣເສີນ, ເພງນະມັສການ, ແລະ ເພງຍ້ອງຍໍສໍລະເສີນຝ່າຍພຣະວິນຍານ ຄືຈົ່ງຮ້ອງເພງຖວາຍແດ່ພຣະເຈົ້າດ້ວຍໃຈໂມທະນາພຣະຄຸນ. 17. ແລະເມື່ອເຈົ້າທັງຫຼາຍຈະເຮັດສິ່ງໃດດ້ວຍວາຈາ ຫຼື ດ້ວຍການກະທຳກໍຕາມ ຈົ່ງເຮັດທຸກສິ່ງໃນພຣະນາມຂອງພຣະເຢຊູຄຣິດເຈົ້າ ແລະ ຂອບພຣະຄຸນພຣະ-ເຈົ້າແລະ ພຣະບິດາໂດຍພຣະອົງນັ້ນ.*

ທາງທີ່ດີທີ່ສຸດເພື່ອຮຽນຮູ້ກ່ຽວກັບພຣະເຈົ້າແມ່ນທາງພຣະທັມພຣະອົງ, ແລະຊີວິດຂອງຜູ້ເຊື່ອແມ່ນທາງທີ່ເຮັດໃຫ້ຄົນໄດ້ພົບພຣະຄຣິດໄດ້ດີທີ່ສຸດ. ເຫັດສັນນັ້ນ, ເວລາຜູ້ເຊື່ອອະນຸຍາດໃຫ້ພຣະທັມພຣະເຈົ້າເຂົ້າຄອບຄອງຈິດໃຈແລະສະຖິດຢູ່ໃນເຮົາ, ພວກເຮົາກໍຈະຊ່ອຍເປີດເຜີຍພຣະຄຣິດໄດ້ດີ. ນີ້ແມ່ນເຫດຜົນອັນນຶ່ງທີ່ທ່ານໂປໂລໜູນໃຈຜູ້ເຊື່ອວ່າ "ຈົ່ງໃຫ້ພຣະທັມຂອງພຣະຄຣິດສະຖິດຢູ່ໃນໃຈຂອງພວກເຈົ້າຢ່າງບໍຣິບູນ." ສະຖິດໝາຍຄວາມວ່າພັກອາສັຍຢູ່. ພຣະຄຳພຣະເຈົ້າຕ້ອງສະຖິດຢູ່ໃນເຮົາເພື່ອເສີມສ້າງເຮົາຈາກຄົນໂລກສູ່ຜູ້ເຊື່ອ-ພຣະວິນຍານນຳພາ. ແທ້ຈິງແລ້ວທ່ານໂປໂລເຕືອນເຮົາວ່າ ຈົ່ງໃຫ້ພຣະທັມສະຖິດຢູ່ໃນເຮົາຢ່າງບໍຣິບູນເພື່ອຄວບຄຸມທຸກສ່ວນໃນຮ່າງກາຍຂອງເຮົາ. ພຣະທັມພຣະເຈົ້າຕ້ອງການທຳລາຍທຸກສ່ວນທີ່ບໍ່ສະທ້ອນສງ່າຣາສີພຣະເຈົ້າໃຫ້ອອກໄປ.

ເມື່ອເຮົາໃຫ້ພຣະທັມສະຖິດຢູ່ໃນເຮົາ, ຜົນຮັບແມ່ນການຖ້ວມລົ້ນດ້ວຍປັນຍາຊຶ່ງຈະຫຼັ່ງໄຫຼສູ່ຄົນອື່ນ. ຄວາມຈິງບໍຣິບູນຂອງພຣະທັມພຣະເຈົ້າສາມາດສິດສອນຜ່ານຮູບແບບຕ່າງໆຂອງດົນຕຣີ. ໃນເມື່ອຖ້ອຍຄຳມີຄວາມໝາຍສລັບຊັບຊ້ອນ, ທ່ານໂປໂລຈຶ່ງຊີ້ແຈງດັ່ງນີ້:

- **ເພງສັຣເສີນ.** ບົດກະວີສັກສິດແລະບົດເພງ ຈາກພຣະທັມເພງສັຣເສີນຂອງພຣະຄັມພີເດີມ.
- **ບົດເພງນະມັສການ.** ເພງສລອງສັຣເສີນໃນເທສການ; ເພງບອກເຖິງຄວາມເຊື່ອຂອງເຮົາແລະຄວາມສັດຊື່ຂອງ

ພຣະເຈົ້າ.

- **ເພງຝ່າຍວິນຍານ.** ຄວາມຫຼາກຫຼາຍຂອງດົນຕຣີປະສົມປະສານ.

| *ດົນຕຣີຊ່ວຍທ່ານເສີມສ້າງຄວາມຮູ້ແລະຄວາມເຂົ້າໃຈພຣະເຈົ້າຢ່າງໃດ?* |
| --- |

ພວກເຮົາຮ້ອງເພງແລະເສບດົນຕຣີທຸກຮູບແບບແດ່ພຣະເຈົ້າດ້ວຍໃຈໂມທະນາພຣະຄຸນ. ພວກເຮົາຕ້ອງຮັກສາ "ນິສັຍກະຕັນຍູ" ໄວ້, ຄືແນມເບິ່ງຊີວິດໃນພາບທຸກສິ່ງທີ່ເຮົາມີຢູ່ ແທນທີ່ຈະເບິ່ງໃນແງ່ທີ່ເຮົາບໍ່ມີ. ຈະມີຫົວໃຈກະຕັນຍູແມ່ນການຫຼຽວເຫັນຊີວິດດ້ວຍໃຈປິຕິຍິນດີແທນທີ່ຈະຫຼຽວເບິ່ງດ້ວຍສີໜ້າບໍ່ເພິ່ງພໍໃຈ.

ພວກເຮົາບໍ່ຄວນຂອບຄຸນແຕ່ເວລາຮ້ອງເພງເທົ່ານັ້ນ. ບໍ່ວ່າເຮົາຈະເຮັດຫຍັງ, ພວກເຮົາຕ້ອງສະແດງຄວາມຂອບຄຸນພຣະເຈົ້າແລະ *"ຈົ່ງເຮັດທຸກສິ່ງ ໃນພຣະນາມຂອງພຣະເຍຊູຄຣິດເຈົ້າ" (ຂໍ້17).* ເວົ້າອີກຢ່າງນຶ່ງວ່າ, ທຸກຄຳເວົ້າແລະການກະທຳຕ້ອງເຮັດດ້ວຍໃຈສຳນຶກໃນຄວາມເປັນພຣະເຈົ້າ, ໃນສິດອຳນາດ, ແລະຊື່ສຽງຂອງພຣະຄຣິດ. ພຣະອົງຊົງເປັນອົງພຣະຜູ້ເປັນເຈົ້າເໜືອທຸກສິ່ງທີ່ເຮົາທຳແລະພວກເຮົາຖວາຍຄຳຂອບພຣະຄຸນແດ່ພຣະອົງສຳລັບທຸກສິ່ງທີ່ພຣະອົງຊົງກະທຳ. ພຣະຄຣິດໄດ້ຊົງປະທານສິດພິເສດແກ່ພວກເຮົາເພື່ອຍົກຍໍຊື່ສຽງແລະເຮັດໃຫ້ຄົນຮູ້ຈັກພຣະອົງເພື່ອພຣະອົງຈະໄດ້ຮັບກຽດຕິຍົດ.

ຂ້າພະເຈົ້າຫວັງວ່າທ່ານຈະເຂົ້າໃຈວ່າມັນສຳຄັນພຽງໃດທີ່ເຮົາສະແດງຄວາມເຊື່ອຂອງເຮົາຕໍ່ຄົນອື່ນໂດຍທາງຄຸນສົມບັດແລະການກະທຳຂອງເຮົາ. ຄຳພຍານຄວາມຮັກ ແລະຄວາມພົ້ນຂອງພຣະເຈົ້າດ້ວຍທາງຄຳເວົ້າໄດ້ຮັບການໜູນຫຼັງດ້ວຍຊີວິດທີ່ເຮົານຳພາ. ຫຼາຍຄົນອາດໂຕ້ຖຽງໃນເຣື່ອງຫຼັກທັມແລະສາສນາ, ແຕ່ເຂົາບໍ່ສາມາດຕໍ່ວ່າຊີວິດທີ່ມີສູນກາງແລະການປັບປຸ່ງດ້ວຍພຣະຄຣິດ. ຊີວິດທີ່ເຮົານຳພາໃນພຣະຄຣິດເປັ່ງສຽງດັງກ້ອງ.

| *ບົດບາດອັນໃດທີ່ກຸ່ມຂອງເຮົາສະແດງອອກໃນການຊ່ວຍເຫຼືອກັນເຕີບໃຫຍ່ຂຶ້ນເປັນເໝືອນພຣະຄຣິດ?* |
| --- |

## ນຳໃຊ້ໃນຊີວິດ

ທ່ານຈະຮັບປະກັນໄດ້ຢ່າງໃດວ່າການກະທຳຂອງທ່ານສອດຄ່ອງກັບຖ້ອຍຄຳທີ່ທ່ານແບ່ງປັນ? ຈົ່ງເລືອກການນຳໃຊ້ອັນນຶ່ງຕໍ່ລົງ
ໄປນີ້:

- **ສາຣະພາບ.** ມີບ່ອນໃດໃນຊີວິດຂອງທ່ານທີ່ບໍ່ສອດຄ່ອງກັບຖ້ອຍຄຳຂອງພຣະຄຣິດ? ຈົ່ງອະທິຖານຂໍພຣະເຈົ້າເປີດເຜີຍ ຄວາມບາບຫຼືນິສັຍໃດນຶ່ງ. ຈົ່ງສາຣະພາບສິ່ງເຫຼົ່ານັ້ນແລະກັບໃຈເສັຽໃໝ່.
- **ຮັບເອົາການແກ້ໄຂໃຫ້ຖືກຕ້ອງ.** ຈົ່ງອະນຸຍາດເພື່ອນທີ່ເຮົາວາງໃຈໄດ້ຊີ້ບອກເວລາເຮົາຄິດເໝືອນກັບໂລກແລະບໍ່ຄິດເໝືອນ ພຣະຄຣິດ.
- **ແບ່ງປັນ.** ເມື່ອພຣະເຈົ້າໃຫ້ໂອກາດທ່ານແບ່ງປັນຄວາມເຊື່ອຂອງທ່ານ, ຈົ່ງຍອມຮັບຄວາມບາບແລະຄວາມລົ້ມເຫຼວຂອງ ທ່ານເອງ. ມັນສຳຄັນໃນການເປັນຄົນສ່ອງໃສ, ແຕ່ຈົ່ງປັກຕາໃສ່ພຣະຄຣິດຜູ້ທີ່ໄດ້ໃຫ້ອະພັຍ ແລະເສີມ ສ້າງທ່ານໃໝ່.

ພວກທີ່ຢູ່ເພື່ອພຣະຄຣິດສາມາດເຮັດໃຫ້ຊື່ສຽງພຣະອົງເປັນທີ່ຮູ້ຈັກໄດ້ດີ. ແລະຜູ້ເຊື່ອແຕ່ລະຄົນກໍສາມາດເຮັດໄດ້ຄືກັນ. ເມື່ອຄົນອື່ນເຫັນພຣະເຈົ້າໃນເຮົາ, ພວກເຂົາອາດຖືກດຶງດູດໃຫ້ມີຄວາມສັມພັນກັບພຣະອົງເໝືອນກັນ.

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org ໂດຍ PSI**